Paid Leave Oregon

# ກກການຄຸ້ມຄອງຜູ້ເຮັດທຸລະກິດສ່ວນຕົວ

## ການລາພັກທີ່ໄດ້ຮັບຄ່າຈ້າງຂອງລັດ Oregon ແມ່ນໂຄງການທີ່ຮັບປະກັນວ່າບຸກຄົນ, ນາຍຈ້າງ, ແລະ ຄອບຄົວທຸກປະເພດມີເວລາ ແລະ ການສະໜັບສະໜູນທີ່ເຂົາເຈົ້າຕ້ອງການເພື່ອດູແລຕົນເອງ ແລະ ຄົນທີ່ເຂົາເຈົ້າຮັກເມື່ອມີຄວາມຈຳເປັນຫຼາຍທີ່ສຸດ.

## ຜູ້ເຮັດທຸລະກິດສ່ວນຕົວຈະໄດ້ຮັບການຄຸ້ມຄອງການລາພັກທີ່ໄດ້ຮັບຄ່າຈ້າງຂອງລັດ Oregon ບໍ?

ບຸກຄົນທີ່ໄດ້ຮັບລາຍໄດ້ຈາກການເຮັດທຸລະກິດສ່ວນຕົວ, ລວມມີ ຜູ້ຮັບເໝົາອິດສະຫຼະ, ສາມາດເລືອກເຂົ້າຮ່ວມໃນໂຄງກການລາພັກທີ່ໄດ້ຮັບຄ່າຈ້າງຂອງລັດ Oregon ໂດຍກຳລັງສະໝັກຂໍການຄຸ້ມຄອງ ແລະ ການຈ່າຍຄ່າສົມທົບ, ທ່ານອາດຈະໄດ້ຮັບການຄຸ້ມຄອງ ຖ້າທ່ານມີວຽກເຮັດງານທຳອື່ນໃນລັດ Oregon. ເຖິງຢ່າງໃດກໍ່ຕາມ, ຜົນປະໂຫຍດທີ່ອາດຈະບໍ່ເກີດຂຶ້ນຈາກການມີລາຍໄດ້ຂອງທ່ານຈາກການເຮັດທຸລະກິດສ່ວນຕົວຂອງທ່ານ ຍົກເວັ້ນ ທ່ານໄດ້ຮັບການຄຸ້ມຄອງ ແລະ ຈ່າຍເງິນສົມທົບ.

## ຂ້າພະເຈົ້າຈະຖືວ່າເຮັດທຸລະກິດສ່ວນຕົວບໍ ຖ້າຂ້າພະເຈົ້າເປັນເຈົ້າຂອງທຸລະກິດ?

ມັນຂຶ້ນກັບວິທີການຈ່າຍເງິນຕົນເອງໃນການເຮັດທຸລະກິດສ່ວນຕົວຂອງທ່ານ. ຖ້າທ່ານເປັນພະນັກງານຂອງທຸລະກິດ ແລະ ໄດ້ຮັບເງິນເດືອນໂດຍການຈ່າຍໃບເຊັກທີ່ທ່ານຕ້ອງລາຍງານຜ່ານ W2 ກ່ຽວກັບວຽກທີ່ທ່ານເຮັດຢູ່ໃນລັດ Oregon, ສະນັ້ນຖືວ່າທ່ານເປັນພະນັກງານ ແລະ ຈະໄດ້ຮັບການຄຸ້ມຄອງໂດຍອັດຕະໂນມັດຈາກການລາພັກທີ່ໄດ້ຮັບຄ່າຈ້າງຂອງລັດ Oregon. ຖ້າທ່ານໄດ້ຮັບເງິນຈາກການປັນຜົນທຸລະກິດ ທີ່ທ່ານລາຍງານວ່າເປັນອາກອນລາຍໄດ້ຈາກການເຮັດທຸລະກິດສ່ວນຕົວ, ສະນັ້ນ, ທ່ານເປັນຜູ້ເຮັດທຸລະກິດສ່ວນຕົວ ແລະ ທ່ານບໍ່ໄດ້ຮັບການຄຸ້ມຄອງໂດຍອັດຕະໂນມັດ. ທ່ານສາມາດເລືອກທີ່ຈະເຂົ້າຮ່ວມໂຄງການລາພັກທີ່ໄດ້ຮັບຄ່າຈ້າງຂອງລັດ Oregon ຜ່ານການສະໝັກຂໍການຄຸ້ມຄອງ .

## ຂ້າພະເຈົ້າຫາກໍ່ເລີ່ມທຸລະກິດສ່ວນຕົວໃນລັດ Oregon. ເມື່ອໃດຂ້າພະເຈົ້າຈຶ່ງສາມາດຂໍລາພັກແບບໄດ້ຮັບຄ່າຈ້າງ?

ທ່ານມີສິດສະໝັກຂໍການຄຸ້ມຄອງເມື່ອທ່ານມີລາຍໄດ້ຢ່າງໜ້ອຍ 1,000 ໂດລາຈາກການເຮັດທຸລະກິດສ່ວນຕົວໃນປີອາກອນທີ່ຜ່ານມາໃນລັດ Oregon. ທ່ານຍັງຕ້ອງຕອບສະໜອງຂໍ້ກຳນົດຂັ້ນຕ່ຳອື່ນໆ, ເຊິ່ງໄດ້ລະບຸໄວ້ຂ້າງຢູ່ລຸ່ມນີ້. ເມື່ອທ່ານເຫັນວ່າຄົບເງື່ອນໄຂແລ້ວ, ທ່ານສາມາດສະໝັກຂໍການຄຸ້ມຄອງໄດ້ທຸກເວລາ.

## ຂໍ້ກຳນົດໃນການໄດ້ຮັບການຄຸ້ມຄອງມີຫຍັງແດ່?

ກ່ອນການສະໝັກຂໍການລາພັກທີ່ໄດ້ຮັບຄ່າຈ້າງຂອງລັດ Oregon, ທ່ານຕ້ອງ:

- $ ມີລາຍໄດ້ຢ່າງຕ່ຳ 1,000 ໂດລາ ໃນລັດ Oregon ທີ່ຕ້ອງເສຍອາກອນລາຍໄດ້ຈາກການເຮັດທຸລະກິດສ່ວນຕົວໃນປີອາກອນປີຜ່ານມາ
- $ ໄດ້ປະກອບແບບຟອມຄຳຮ້ອງຂໍການຄຸ້ມຄອງຂອງຜູ້ທີ່ເຮັດທຸລະກິດສ່ວນຕົວ
- $ ສຳເນົາໃບຄືນພາສີຂອງທ່ານໜຶ່ງສະບັບ ເພື່ອສະແດງໃຫ້ເຫັນລາຍຮັບການເຮັດທຸລະກິດສ່ວນຕົວຂອງທ່ານ ( ກະລຸນາເບິ່ງເວັບໄຊທ໌ຂອງພວກເຮົາສຳລັບຂໍ້ມູນເພີ່ມເຕີມກ່ຽວກັບເອກະສານອາກອນທີ່ທ່ານຕ້ອງການສົ່ງໃຫ້ພວກເຮົາ )
- $ ເຫັນດີໄປຫາຈ່າຍເງິນສົມທົບໃຫ້ຮອດສາມປີ ແລະ ໃຫ້ຂໍ້ມູນເພີ່ມເຕີມທີ່ພວກເຮົາອາດຈະຮ້ອງຂໍຈາກທ່ານ

## ຂ້າພະເຈົ້າຈະໄດ້ຈ່າຍເງິນສົມທົບຫຼາຍປານໃດ?

ທ່ານຈະຕ້ອງຈ່າຍເງິນສົມທົບເປັນລາຍໄຕມາດ. ອັດຕາການສົມທົບໃນປະຈຸບັນສຳລັບການຄຸ້ມຄອງຜູ້ເຮັດທຸລະກິດສ່ວນຕົວແມ່ນ 0.6% ຂອງລາຍໄດ້ທີ່ຕ້ອງເສຍອາກອນປະຈຳປີຂອງທ່ານ, ສູງສຸດເຖິງ ລາຍໄດ້ສູງສຸດທີ່ກຳນົດໂດຍອົງການປະກັນສັງຄົມ . ລາຍໄດ້ທີ່ຕ້ອງເສຍອາກອນປະຈຳປີໂດຍປະມານຂອງທ່ານແມ່ນແບ່ງອອກເປັນສີ່ເທື່ອຈ່າຍເປັນປະຈຳໄຕມາດເທົ່າໆກັນ.

**ຕົວຢ່າງ:**

ຜູ້ທີ່ມີລາຍໄດ້ 60,000 ໂດລາຕໍ່ປີຈາກລາຍໄດ້ຈາກການເຮັດທຸລະກິດສ່ວນຕົວຈະຈ່າຍເງິນສົມທົບ 90 ໂດລາຕໍ່ໄຕມາດ.

60,000 ໂດລາ x 0.006 = 360 ໂດລາ ເປັນເງິນສົມທົບປະຈຳປີ

$360 ÷ 4 ໄຕມາດ = $90 ຕໍ່ໄຕມາດ

ທ່ານອາດຈະຈ່າຍໜ້ອຍລົງໃນລະຫວ່າງໄຕມາດທຳອິດ ຫຼື ສຸດທ້າຍ ທີ່ ທ່ານມີການຄຸ້ມຄອງ ຖ້າທ່ານບໍ່ໄດ້ຮັບການຄຸ້ມຄອງໃນໄຕມາດຕາມປະຕິທິນທັງໝົດ.

## ການຄຸ້ມຄອງຂອງຂ້າພະເຈົ້າຈະເລີ່ມຕົ້ນເມື່ອໃດ?

ການຄຸ້ມຄອງຂອງທ່ານຈະເລີ່ມຕົ້ນທັນທີທີ່ພວກເຮົາໄດ້ຮັບ ແລະ ດຳເນີນການໃບສະໝັກທີ່ທ່ານປະກອບຄົບຊຸດແລ້ວ. ພວກເຮົາຈະອີງໃສ່ວັນທີມີຜົນບັງຄັບໃຊ້ຂອງການຄຸ້ມຄອງຂອງທ່ານໃນວັນທີທີ່ພວກເຮົາໄດ້ຮັບໃບສະໝັກທີ່ທ່ານປະກອບສຳເລັດແລ້ວ. ຖ້າທ່ານສະໝັກຂໍການຄຸ້ມຄອງໃນລະຫວ່າງໄຕມາດ, ພວກເຮົາຈະປັບການຈ່າຍເງິນຄັ້ງທຳອິດຂອງທ່ານໂດຍອີງໃສ່ເວລາທີ່ເຫຼືອໃນໄຕມາດນັ້ນ .

**ໝາຍເຫດ:** ໃບສະໝັກທີ່ປະກອບຈະບໍ່ຄົບຖ້ວນ ຖ້າບໍ່ມີແບບຟອມອາກອນ ຫຼື ຂໍ້ມູນອື່ນໆທີ່ຈຳເປັນ.

## ເມື່ອໃດຂ້າພະເຈົ້າສາມາດຂໍລາພັກທີ່ໄດ້ຮັບຄ່າຈ້າງໄດ້ ຫຼັງຈາກຂ້າພະເຈົ້າເລີ່ມຂໍການຄຸ້ມຄອງ?

ທ່ານສາມາດຂໍເງິນອຸດໜູນຫຼັງໄຕມາດທີ່ທ່ານໄດ້ຈ່າຍເງິນສົມທົບແລ້ວໜຶ່ງຄັ້ງ . ຕົວຢ່າງ, ຖ້າທ່ານເລີ່ມຕົ້ນຂໍການຄຸ້ມຄອງໃນໄຕມາດທີ 2, ທ່ານອາດຈະມີສິດໄດ້ຮັບຜົນປະໂຫຍດໃນໄຕມາດທີ 3.

**ໝາຍເຫດ:**
ຜົນປະໂຫຍດຂອງພວກເຮົາແມ່ນອີງໃສ່ຈຳນວນເງິນທັງໝົດທີ່ທ່ານໄດ້ຈ່າຍເປັນເງິນສົມທົບໃນ ປີພື້ນຖານຂອງທ່ານ, ເຊິ່ງເອີ້ນວ່າລາຍໄດ້ທີ່ນັບໄດ້. ຖ້າທ່ານບໍ່ມີລາຍໄດ້ອື່ນໆທີ່ນັບໄດ້ ແລະ ຈ່າຍເງິນສົມທົບພຽງຄັ້ງດຽວ, ຜົນປະໂຫຍດຂອງທ່ານອາດຈະຫຼຸດລົງ 75% ຫຼື ຫຼາຍກວ່ານັ້ນ.

**ລາຍໄດ້ທີ່ນັບໄດ້**
ແມ່ນລາຍໄດ້ສຸດທິທີ່ທ່ານໄດ້ຈ່າຍເງິນສົມທົບໃນລະຫວ່າງໄຕມາດໃນປີພື້ນຖານຂອງທ່ານ (ຫຼື ປີພື້ນຖານອື່ນ).

## ຂ້າພະເຈົ້າສາມາດຈ່າຍໃນໄຕມາດກ່ອນໜ້ານີ້ ເພື່ອໄດ້ຮັບຜົນປະໂຫຍດທີ່ອາດເກີດຂຶ້ນໄດ້ບໍ?

ບໍ່.
ການສົມທົບຂອງທ່ານຈະເລີ່ມຕົ້ນເມື່ອໃບສະໝັກຂອງທ່ານໄດ້ຮັບການອະນຸມັດແລ້ວເທົ່ານັ້ນ. ທ່ານບໍ່ສາມາດຈ່າຍ ເງິນສົມທົບເພີ່ມ ເພື່ອເພີ່ມຜົນປະໂຫຍດທີ່ອາດເກີດຂຶ້ນຂອງທ່ານໄດ້. ພວກເຮົາຈະໃຊ້ພຽງແຕ່ລາຍໄດ້ທີ່ທ່ານໄດ້ຈ່າຍ ເງິນສົມທົບ ເພື່ອຄິດໄລ່ຜົນປະໂຫຍດຂອງທ່ານເທົ່ານັ້ນ.

## ມີຜົນປະໂຫຍດຫຍັງແດ່ທີ່ສະເໜີໃຫ້ຜ່ານການລາພັກທີ່ໄດ້ຮັບຄ່າຈ້າງຂອງລັດ Oregon?

ຄຸ້ມຄອງໃຫ້ການລາພັກທີ່ໄດ້ຮັບຄ່າຈ້າງ 12 ອາທິດຕໍ່ປີ, ບວກກັບອີກສອງອາທິດສຳລັບການລາພັກທີ່ກ່ຽວຂ້ອງກັບການຖືພາ. ຈຳນວນເງິນຂັ້ນຕໍ່າ ແລະ ສູງສຸດ ທີ່ທ່ານສາມາດໄດ້ຮັບໃນຜົນປະໂຫຍດຕໍ່ອາທິດຈະປ່ຽນແປງໃນແຕ່ລະປີ ແລະ ອີງຕາມລາຍໄດ້ສະເລ່ຍຂອງລັດໃນລັດ Oregon.

## ຜົນປະໂຫຍດຂອງຜູ້ທີ່ເຮັດທຸລະກິດສ່ວນຕົວຄືກັນກັບພະນັກງານບໍ່?

ແມ່ນ. ພວກເຮົາຈ່າຍເງິນສະຫວັດດີການໃນລັກສະນະດຽວກັນໃຫ້ທັງຜູ້ທີ່ເຮັດທຸລະກິດສ່ວນຕົວ ແລະ ພະນັກງານ.

## ຂ້າພະເຈົ້າເປັນຜູ້ທີ່ເຮັດທຸລະກິດສ່ວນຕົວ ແລະ ເຮັດວຽກໃຫ້ນາຍຈ້າງ. ຂ້າພະເຈົ້າຍັງສາມາດລົງທະບຽນເພື່ອຮັບການຄຸ້ມຄອງໄດ້ບໍ່?

ແມ່ນ. ສຳລັບລາຍໄດ້ຈາກການເຮັດທຸລະກິດສ່ວນຕົວຂອງທ່ານ, ທ່ານຕ້ອງສະໝັກຂໍການຄຸ້ມຄອງ ແລະ ຈ່າຍເງິນສົມທົບດ້ວຍຕົນເອງ. ສຳລັບການຈ້າງງານ W2 ຂອງທ່ານ, ນາຍຈ້າງຂອງທ່ານຈະຫັກເງິນສົມທົບຂອງທ່ານຈາກເງິນເດືອນຂອງທ່ານ. ຫຼັງຈາກນັ້ນ, ຖ້າທ່ານຕ້ອງການເງິນຊ່ວຍເຫຼືອການຂໍລາພັກທີ່ໄດ້ຮັບຄ່າຈ້າງ, ພວກເຮົາຈະຄິດໄລ່ເງິນຊ່ວຍເຫຼືອຂອງທ່ານໂດຍອີງໃສ່ເງິນສົມທົບທີ່ຈ່າຍສຳລັບວຽກທັງສອງປະເພດ.

## ຂ້າພະເຈົ້າສາມາດເຮັດວຽກໄດ້ໃນຂະນະທີ່ຂ້າພະເຈົ້າໄດ້ຮັບຜົນປະໂຫຍດຈາກການລາພັກທີ່ໄດ້ຮັບຄ່າຈ້າງບໍ່?

ການລາພັກທີ່ໄດ້ຮັບຄ່າຈ້າງແມ່ນການລາພັກຈາກວຽກທັງໝົດ, ລວມທັງການເຮັດທຸລະກິດສ່ວນຕົວ. ຖ້າທ່ານລາພັກຕິດຕໍ່ກັນ, ທ່ານຈະບໍ່ສາມາດເຮັດວຽກໄດ້ເລີຍໃນລະຫວ່າງການລາພັກທີ່ໄດ້ຮັບຄ່າຈ້າງຂອງທ່ານ. ຖ້າທ່ານລາພັກເປັນໄລຍະ, ທ່ານສາມາດເຮັດວຽກໃນມື້ ຫຼື ອາທິດທີ່ທ່ານບໍ່ໄດ້ຮຽກຮ້ອງສິດປະໂຫຍດຈາກການລາພັກທີ່ໄດ້ຮັບຄ່າຈ້າງ.

## ມີຂໍ້ກຳນົດຫຍັງແດ່ຫຼັງຈາກຂ້າພະເຈົ້າເລີ່ມການຄຸ້ມຄອງ?

ເມື່ອທ່ານລົງທະບຽນໃນການຄຸ້ມຄອງການລາພັກທີ່ໄດ້ຮັບຄ່າຈ້າງແລ້ວ ທ່ານຕ້ອງ:

- $ ຈ່າຍເງິນສົມທົບທຸກໆໄຕມາດ
- $ ລາຍງານລາຍໄດ້ຂອງທ່ານ ແລະ ໃຫ້ສຳເນົາການຄືນອາກອນລາຍໄດ້ກ່ອນວັນທີ 30 ເມສາ ຂອງທຸກປີ

## ຈະຕ້ອງມີສັນຍາດົນປານໃດກັບໂຄງການຄຸ້ມຄອງການລາພັກທີ່ໄດ້ຮັບຄ່າຈ້າງ?

ເມື່ອທ່ານເລືອກແລ້ວ ພາຍໃຕ້ການຄຸ້ມຄອງເງິນອຸດໜູນຂອງໂຄງການລາພັກທີ່ໄດ້ຮັບຄ່າຈ້າງ, ທ່ານຕ້ອງຕົກລົງທີ່ຈະຈ່າຍເງິນສົມທົບຢ່າງໜ້ອຍສາມປີ.

## ຂ້າພະເຈົ້າສາມາດຢຸດຈ່າຍເງິນຄຸ້ມຄອງຂອງຂ້າພະເຈົ້າກ່ອນກຳນົດໄດ້ບໍ່?

ກ່ອນສາມປີ, ທ່ານສາມາດຢຸດຈ່າຍເງິນຄຸ້ມຄອງການລາພັກທີ່ໄດ້ຮັບຄ່າຈ້າງຂອງທ່ານໄດ້ກໍລະນີທ່ານບໍ່ໄດ້ເຮັດທຸລະກິດສ່ວນຕົວອີກຕໍ່ໄປ ຫຼື ໄດ້ຍື່ນຂໍລົ້ມລະລາຍ. ຫຼັງຈາກສາມປີແລ້ວ,

ທ່ານສາມາດຢຸດຈ່າຍການຄຸ້ມຄອງຂອງທ່ານໄດ້ທຸກເວລາ.

## ຈະເກີດຫຍັງຂຶ້ນຖ້າຂ້າພະເຈົ້າບໍ່ໄດ້ຈ່າຍເງິນສົມທົບ?

ອາດຈະໄດ້ຢຸດການຄຸ້ມຄອງການລາພັກທີ່ໄດ້ຮັບຄ່າຈ້າງຂອງທ່ານ
ຖ້າທ່ານບໍ່ຈ່າຍເງິນສົມທົບຕາມເວລາກໍານົດ.
ຖ້າພວກເຮົາຢຸດການຄຸ້ມຄອງຂອງທ່ານຍ້ອນການບໍ່ຈ່າຍເງິນ,
ທ່ານບໍ່ສາມາດຂໍການຄຸ້ມຄອງຄືນໃໝ່ໄດ້ເປັນເວລາສາມປີຫຼັງຈາກວັນທີທີ່ການຄຸ້ມຄອງຂອງທ່ານສິ້ນສຸດລົງ.